ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ນະຄອນຫຼວງວຽງຈັນ

ຫ້ອງວ່າການ

ເລກທີ: 083 /ຫວນວ

ລົງວັນທີ: 10. 11. 2021

# ແຈ້ງການ

ຮຽນ: - ທ່ານເຈົ້າເມືອງຫາດຊາຍຟອງ;

- ທ່ານເຈົ້າເມືອງໄຊເສດຖາ.
- ທ່ານຫົວໜ້າພະແນກການ-ອົງການລັດທຽບເທົ່າ ຂັ້ນນະຄອນຫຼວງວຽງຈັນ.
- ບັນດານາຍບ້ານ, ຜູ້ອຳນວຍການບໍລິສັດ, ຫ້າງຮ້ານ, ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ຕະຫຼອດຮອດພະນັກງານ, ທະຫານ, ຕຳຫຼວດ, ພະນັກງານບຳນານ, ພໍ່ແມ່ປະຊາຊົນ, ຜູ້ທີ່ມີສິດໃຊ້ ແລະ ຜູ້ມີສິດນຳໃຊ້ທີ່ດິນ ໃນຂອບເຂດພື້ນທີ່ຂອງໂຄງການ ເມືອງທັນສະໄໝ (Smart City).

ເລື່ອງ: ຫ້າມບໍ່ໃຫ້ປຸກສ້າງ, ຕໍ່ເຕີມ, ຊື້-ຂາຍ, ຊວດຈຳ ຫຼື ໂອນສິດໃຊ້-ສິດນຳໃຊ້ທີ່ດິນ, ຈົກໜອງນ້ຳ, ຈົກດິນຂາຍ ຢູ່ຂອບເຂດໂຄງການພັດທະນາ ເມືອງທັນສະໄໝ (Smart City) ນະຄອນຫຼວງວຽງຈັນ ຕາມແຜນທີ່ຂອບເຂດສຶກສາຄວາມເປັນໄປໄດ້ ຂອງກົມທີ່ດິນ, ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ຮັບຮອງ ສະບັບເລກທີ 0371, ລົງວັນທີ 04 ກຸມພາ 2021.

- ອີງຕາມ ໃບມອບສິດຂອງນາຍົກລັດຖະມົນຕີ ໃຫ້ລັດຖະມົນຕີ ກະຊວງແຜນການ ແລະ ການລົງທຶນ ເຊັນບົດບັນທຶກຄວາມເຂົ້າໃຈ (MOU) ເພື່ອສຶກສາສຳຫຼວດຄວາມເປັນໄປໄດ້ ໂຄງການພັດທະນາເມືອງທັນສະໄໝ (SMART CITY) ສະບັບເລກທີ 78/ນຍ, ລົງວັນທີ 13 ກໍລະກົດ 2021;
- ອີງຕາມ ບົດບັນທຶກຄວາມເຂົ້າໃຈ (MOU) ເພື່ອສຳຫຼວດ, ສຶກສາຄວາມເປັນໄປໄດ້ ແລະ ອອກແບບເຂດພັດທະນາເມືອງທັນສະໄໝ (SMART CITY) ຢູ່ເຂດບ້ານໜອງແປນ ເມືອງຫາດຊາຍຟອງ ນະຄອນຫຼວງວຽງຈັນ ສະບັບລົງວັນທີ 7 ສິງຫາ 2020 ແລະ ບົດບັນທຶກດັດແກ້ ສະບັບລົງວັນທີ 22 ມີນາ 2021;
- ອີງຕາມ ຂໍ້ຕົກລົງຂອງທ່ານຮອງນາຍົກລັດຖະມົນຕີ, ລັດຖະມົນຕີ ກະຊວງແຜນການ ແລະ ການລົງທຶນ ວ່າດ້ວຍການແຕ່ງຕັ້ງຄະນະກຳມະການ ເພື່ອລົງຈັດຕັ້ງປະຕິບັດວຽກງານຕົວຈິງ ໃນການລົງເກັບກຳຂໍ້ມູນທີ່ດິນ, ສິ່ງປຸກສ້າງ ແລະ ຜົນລະປູກ ຂອງໂຄງການພັດທະນາເມືອງທັນສະໄໝ ນະຄອນຫຼວງວຽງຈັນ ສະບັບເລກທີ 1719/ກຜທ.ຫຂສພ6, ລົງວັນທີ 21 ຕຸລາ 2020;
- ອີງຕາມ ແຜນທີ່ຂອບເຂດສຶກສາຄວາມເປັນໄປໄດ້ຂອງໂຄງການ ຢັ້ງຢືນຈາກກົມທີ່ດິນ, ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ສະບັບເລກທີ 0371, ລົງວັນທີ 04 ກຸມພາ 2021;
- ອີງຕາມ ຂໍ້ຕົກລົງຂອງທ່ານເຈົ້າຄອງນະຄອນຫຼວງວຽງຈັນ ວ່າດ້ວຍການແຕ່ງຕັ້ງຄະນະຊີ້ນຳການສຳຫຼວດ ແລະ ເກັບກຳຂໍ້ມູນ ເນື້ອທີ່ດິນ, ສິ່ງປຸກສ້າງ ແລະ ຜົນລະປູກ ຂອງໂຄງການພັດທະນາເມືອງທັນສະໄໝ ນະຄອນຫຼວງວຽງຈັນ ຢູ່ເມືອງຫາດຊາຍຟອງ ແລະ ເມືອງໄຊເສດຖາ ນະຄອນຫຼວງວຽງຈັນ ສະບັບເລກທີ 538/ຈນວ, ລົງວັນທີ 8 ກໍລະກົດ 2021;
- ອີງຕາມ ການຊີ້ນຳຂອງທ່ານເຈົ້າຄອງນະຄອນຫຼວງວຽງຈັນ ລົງວັນທີ 9 ພະຈິກ 2021.

**ຫ້ອງວ່າການນະຄອນຫຼວງວຽງຈັນ ຂໍຖືເປັນກຽດແຈ້ງມາຍັງບັນດາທ່ານຊາບ ດັ່ງນີ້:**

1. ຂອບເຂດພື້ນທີ່ໂຄງການເມືອງທັນສະໄໝ (Smart City) ທີ່ກິນທີ່ດິນ, ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ໄດ້ຢັ້ງຢືນ ແລະ ຮັບຮອງ ເຂດສຶກສາຄວາມເປັນໄປໄດ້ຂອງໂຄງການ ຕາມເອກະສານສະບັບເລກທີ 0371, ລົງວັນທີ 04 ກຸມພາ 2021, ເຊິ່ງກວມຢູ່ໃນ 2 ເມືອງ ຄື:

❶ ເມືອງໄຊເສດຖາ ມີຈຳນວນ 5 ບ້ານ ເຊັ່ນ: ບ້ານຈອມສີ, ບ້ານນາຄວາຍໃຕ້, ບ້ານນາຄວາຍກາງ, ບ້ານນາໃນ ແລະ ບ້ານນາໄຊ.

❷ ເມືອງຫາດຊາຍຟອງ ມີຈຳນວນ 7 ບ້ານ ເຊັ່ນ: ບ້ານດົງໂພນແຮ່, ບ້ານຄຳຈະເລີນ, ບ້ານໜອງແປນເໜືອ, ບ້ານໜອງແປນໃຕ້, ບ້ານຊຽງຄວນ, ບ້ານທ່ານະ ແລະ ບ້ານໜອງພົງ.

ບັນດາບ້ານທີ່ກ່າວມາຂ້າງເທິງນີ້ ແມ່ນຈະໄດ້ເຂົ້າຮ່ວມ ແລະ ໃຫ້ຄວາມຮ່ວມມື ກັບ ບໍລິສັດ ໃນການລົງສຳຫຼວດປັກຂອບເຂດ ພື້ນທີ່ຕົວຈິງ ຕາມຂໍ້ຕົກລົງຂອງທ່ານເຈົ້າຄອງນະຄອນຫຼວງວຽງຈັນ ສະບັບເລກທີ 705/ຈນວ, ລົງວັນທີ 31 ສິງຫາ 2021.

2. ຫ້າມບໍ່ໃຫ້ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ຕະຫຼອດຮອດພະນັກງານ, ທະຫານ, ຕຳຫຼວດ ແລະ ພະນັກງານບຳນານ ເຂົ້າໄປບຸກລຸກ ຫຼື ກະທຳການໃດໆ ຢູ່ຂອບເຂດໂຄງການພັດທະນາ ເມືອງທັນສະໄໝ (Smart City) ນະຄອນຫຼວງວຽງຈັນ, ເຊິ່ງນອນໃນຂອບເຂດເມືອງຫາດຊາຍຟອງ ແລະ ເມືອງໄຊເສດຖາ.

3. ຫ້າມບໍ່ໃຫ້ຕໍ່ເຕີມ, ປຸກສ້າງ, ຊື້-ຂາຍ, ແລກປ່ຽນ, ມອບ-ໂອນສິດໃຊ້ ແລະ ນຳໃຊ້ທີ່ດິນ, ຂຸດຈ່ຳ, ຈົກໜອງນ້ຳ, ຈົກດິນຂາຍ, ທຳການຜະລິດ, ພັດທະນາທີ່ດິນໃດໆ ຢູ່ຂອບເຂດໂຄງການພັດທະນາ ເມືອງທັນສະໄໝ (Smart City) ນະຄອນຫຼວງວຽງຈັນ ເຊິ່ງນອນໃນຂອບເຂດເມືອງຫາດຊາຍຟອງ ແລະ ເມືອງໄຊເສດຖາ.

4. ຫ້າມນາຍບ້ານ ແລະ ອົງການປົກຄອງຂັ້ນຕ່າງໆທີ່ກ່ຽວຂ້ອງ ເຊັນໜັງສືອະນຸມັດ ຫຼື ອຳນວຍຄວາມສະດວກໃດໆ ທີ່ເປັນການລະເມີດຕໍ່ຂໍ້ຫ້າມທີ່ໄດ້ກ່າວມາຂ້າງເທິງນີ້.

5. ມອບໃຫ້ເຈົ້າເມືອງຫາດຊາຍຟອງ ແລະ ເຈົ້າເມືອງໄຊເສດຖາ ລົງເຜີຍແຜ່ແຈ້ງການສະບັບນີ້ ໃຫ້ອົງການປົກຄອງບ້ານ, ຜູ້ອຳນວຍການບໍລິສັດ, ຫ້າງຮ້ານ, ຕະຫຼອດຮອດພະນັກງານ, ທະຫານ, ຕຳຫຼວດ, ພະນັກງານບຳນານ, ເຈົ້າຂອງສິດໃຊ້, ສິດນຳໃຊ້ທີ່ດິນ ແລະ ອົງການປົກຄອງຂັ້ນຕ່າງໆທີ່ກ່ຽວຂ້ອງ ຮັບຊາບຢ່າງທົ່ວເຖິງ ແລະ ປະຕິບັດຢ່າງເຂັ້ມງວດ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງບັນດາທ່ານ ແລະ ພາກສ່ວນທີ່ກ່ຽວຂ້ອງເພື່ອຊາບ ແລະ ພ້ອມກັນຈັດຕັ້ງປະຕິບັດແຈ້ງການສະບັບນີ້ ຢ່າງເຂັ້ມງວດ.

ຫົວໜ້າຫ້ອງວ່າການນະຄອນຫຼວງວຽງຈັນ

ຫ້ອງວ່າການ

ປອ. ໄພຄຳ ໄຊຍະສອນ

ບ່ອນສົ່ງ:

- ເຈົ້າຄອງ-ຮອງເຈົ້າຄອງ ນະຄອນຫຼວງວຽງຈັນ ທ່ານລະ 1 ສະບັບ;
- ຄະນະປະຈຳສະພາປະຊາຊົນ ນະຄອນຫຼວງວຽງຈັນ 1 ສະບັບ;
- ເມືອງຫາດຊາຍຟອງ ນະຄອນຫຼວງວຽງຈັນ 1 ສະບັບ;
- ເມືອງໄຊເສດຖາ ນະຄອນຫຼວງວຽງຈັນ 1 ສະບັບ;
- ພະແນກແຜນການ ແລະ ການລົງທຶນ ນະຄອນຫຼວງວຽງຈັນ 1 ສະບັບ;
- ພະແນກກະສິກຳ ແລະ ປ່າໄມ້ ນະຄອນຫຼວງວຽງຈັນ 1 ສະບັບ;
- ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ນວ 1 ສະບັບ;
- ພະແນກໂຍທາທິການ ແລະ ຂົນສົ່ງ ນະຄອນຫຼວງວຽງຈັນ 1 ສະບັບ;
- ຫ້ອງການສົ່ງເສີມ ແລະ ຄຸ້ມຄອງເຂດເສດຖະກິດພິເສດ ນວ 1 ສະບັບ;
- ຄະນະຊີ້ນຳການສຳຫຼວດ ແລະ ເກັບກຳຂໍ້ມູນ ຕາມຂໍ້ຕົກລົງ ສະບັບເລກທີ 538/ຈນວ, ລົງວັນທີ 8 ກໍລະກົດ 2021 ທ່ານລະ 1 ສະບັບ;
- ບໍລິສັດ ກຸ່ມທາວຈະເລີນ ພັດທະນາກໍ່ສ້າງ ຈຳກັດຜູ້ດຽວ 1 ສະບັບ;
- ບັນດາບ້ານທີ່ກ່ຽວຂ້ອງ ບ້ານລະ 1 ສະບັບ;
- ສຳເນົາ 2 ສະບັບ.